**ບົດປະກອບຄຳເຫັນຂອງທ່ານ ອຸເດດ ສຸວັນນະວົງ**

**ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕໍ່**

**ກອງປະຊຸມທຸລະກິດລາວ ຄັ້ງທີ 13, ວັນທີ 28 ກໍລະກົດ 2021**

**ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ**

**ໃນຫົວຂໍ້**: ໂອກາດ ແລະ ສິ່ງທ້າທາຍຂອງການດຳເນີນທຸລະກິດໃນໄລຍະ "ປົກກະຕິແບບໃໝ່" (New normal)

- ຮຽນທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖື
- ຮຽນທ່ານ ປ.ອ. ຄຳແພງ ໄຊສົມແພງ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື
- ຮຽນບັນດາທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ, ຜູ້ຕາງໜ້າຈາກລັດຖະບານທີ່ນັບຖື
- ຮຽນບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ນັບຖື
- ຮຽນບັນດາທ່ານຜູ້ຕາງໜ້າຈາກສະພາການຄ້າຕ່າງປະເທດ, ສະພາການຄ້າແຂວງ, ສະມາຄົມທຸລະກິດ ແລະ ຜູ້ປະກອບການທຸລະກິດໃນ ສປປ ລາວ ທີ່ນັບຖື
- ຮຽນທ່ານແຂກຜູ້ມີກຽດ, ທ່ານຍິງ ແລະ ທ່ານຊາຍທີ່ນັບຖື

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງທີ່ຕາງໜ້າໃຫ້ພາກທຸລະກິດ ກ່າວມີຄຳເຫັນຕໍ່ກອງປະຊຸມທຸລະກິດລາວ ຄັ້ງທີ 13ໃນມື້ນີ້. ກ່ອນອື່ນຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຕໍ່ທ່ານນາຍົກລັດຖະມົນຕີ ທີ່ໄດ້ໃຫ້ກຽດມາເປັນປະທານກອງປະຊຸມທີ່ສຳຄັນນີ້ ແລະ ຂໍຊົມເຊີຍຄະນະລັດຖະບານ , ບັນດາກະຊວງ ນຳໂດຍກະຊວງອຸດສາຫະກຳ ແລະ ການຄ້າ ທີ່ໄດ້ສະໜັບສະໜູນຂະບວນການປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ທີ່ນຳມາເຖິງການຈັດກອງປະຊຸມທຸລະກິດລາວລະດັບຊາດໃນມື້ນີ້.

ຂ້າພະເຈົ້າຂໍມີຄຳເຫັນຕໍ່ກັບໂອກາດ ແລະ ສິ່ງທ້າທາຍຂອງການດຳເນີນທຸລະກິດໃນໄລຍະ "ປົກກະຕິແບບໃໝ່" ຫຼື New normal ຕໍ່ກອງປະຊຸມໃນມື້ນີ້.

ການລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ເສດຖະກິດຂອງ ສປປ ລາວ ໄດ້ຫົດຖອຍລົງຫຼາຍ ໃນປີ 2020 ເຮັດໃຫ້ອັດຕາຂະຫຍາຍຕົວຂອງເສດຖະກິດຫຼຸດລົງຢູ່ໃນລະດັບ 0.5%. ມີຫຼາຍຂະແໜງການເສດຖະກິດ ທີ່ ໄດ້ຮັບຜົນກະທົບໃນລະດັບທີ່ແຕກຕ່າງກັນ ເຮັດໃຫ້ພາກທຸລະກິດ ແລະ ການຈ້າງງານໄດ້ສູນເສຍຫຼາຍ ໂດຍສະເພາະໃນຂະແໜງການທ່ອງທ່ຽວ ແລະ ການບໍລິການປິ່ນອ້ອມການທ່ອງທ່ຽວ ແລະ ບັນດາຂະແໜງການຜະລິດ, ເນື່ອງມາຈາກມາດຕະການຈຳກັດການເດີນທາງ ແລະ ການເພີ່ມຄວາມລະມັດລະວັງຕໍ່ການແຜ່ລະບາດຂອງພະຍາດຕໍ່ບຸກຄົນ. ຕົວເລກການສຳຫຼວດຜົນກະທົບຂອງການລະບາດຂອງພະຍາດ COVID-19 ໂດຍຫຼາຍສະຖາບັນທັງພາຍໃນ ແລະ ຕ່າງປະເທດໄດ້ຊີ້ແຈງວ່າ ເກືອບ 80% ຂອງທຸລະກິດໄດ້ຖືກກະທົບບໍ່ຫຼາຍກໍໜ້ອຍ ຕໍ່ສະພາບການ. ໃນຂະແໜງທີ່ຖືກກະທົບຫຼາຍກວ່າໝູ່ຄື ທ່ອງທ່ຽວ, ຂົນສົ່ງ ແລະ ການຜະລິດປຸງແຕ່ງ ໄດ້ມີຫຼາຍກິດຈະການທຸລະກິດທີ່ໄດ້ປິດແບບຖາວອນ ຫຼື ເຄື່ອນໄຫວບໍ່ເຕັມເມັດເຕັມໜ່ວຍໃນປີ 2020. ມີ 15% ຂອງແຮງງານໄດ້ສູນເສຍວຽກເຮັດງານທຳ ພ້ອມກັນນັ້ນຈານວນເງິນສົ່ງກັບບ້ານຈາກແຮງງານລາວຢູ່ຕ່າງປະເທດໄດ້ຫຼຸດລົງ ເຊິ່ງໄດ້ເພີ່ມຄວາມຫຍຸ້ງຍາກໃຫ້ຄອບຄົວຈຳນວນຫຼວງຫຼາຍ ທີ່ເພິ່ງພາອາໃສຈາກລາຍຮັບດັ່ງກ່າວ. ການລະບາດຂອງພະຍາດ COVID-19 ຍັງໄດ້ເຮັດໃຫ້ລັດຖະບານປະສົບຄວາມຫຍຸ້ງຍາກດ້ານງົບປະມານຫຼາຍຍິ່ງຂຶ້ນ ໂດຍສະເພາະດ້ານການເກັບລາຍຮັບດ້ານພາສີອາກອນ ແລະ ອື່ນໆ ທີ່ເນື່ອງມາຈາກການຫຼຸດຜ່ອນຂອງກິດຈະການທຸລະກິດ ແລະ ການຈັດຕັ້ງບັນດານະໂຍບາຍຜ່ອນຜັນ ເພື່ອຊ່ວຍເຫຼືອພາກທຸລະກິດ ແລະ ສັງຄົມ.

ໃນໄລຍະການລະບາດຂອງພະຍາດ COVID-19 ໃນປີ 2020 ລັດຖະບານກໍ່ໄດ້ວາງມາດຕະການສະກັດກັ້ນການແຜ່ລະບາດຂອງພະຍາດດັ່ງກ່າວໄດ້ດີພໍສົມຄວນ ເຮັດໃຫ້ຜູ້ຕິດເຊື້ອ ແລະ ຜູ້ເສຍຊີວິດແມ່ນຢູ່ໃນອັນດັບຕ່ຳທີ່ສຸດໃນໂລກ ແລະ ຍັງໄດ້ອຳນວຍຄວາມສະດວກໃຫ້ແກ່ທຸລະກິດໃນຫຼາຍຂະແໜງການໄດ້ມີການປະຄອງຕົວເຮັດໃຫ້ສະພາບເສດຖະກິດໃນປີ 2021 ມີຖານະດີຂຶ້ນ. ທະນາຄານໂລກໄດ້ຄາດຄະເນການເພີ້ມຂຶ້ນຂອງອັດຕາການຂະຫຍາຍຕົວຂອງເສດຖະກິດ (GDP) ເທົ່າ 3.6% ຈາກ 0.5% ໃນປີ 2021. ຂະແໜງກະສິກຳເປັນຂະແໜງທີ່ນຳໜ້າຂອງການຂະຫຍາຍຕົວດ້ານເສດຖະກິດ ຍ້ອນຄວາມຕ້ອງການທີ່ເພີ້ມຂຶ້ນຂອງຕະຫຼາດພາຍໃນ, ການຫຼຸດຜ່ອນການນຳເຂົ້າຜະລິດຕະພັນກະສິກຳຈາກຕ່າງປະເທດ ແລະ ຄວາມຄົງຕົວໃນການສົ່ງອອກຜະລິດຕະພັນກະສິກຳຕາມສັນຍາໃຫ້ແກ່ປະເທດໃກ້ຄຽງ ໂດຍສະເພາະແມ່ນພືດລະດູແລ້ງ ແລະ ຜະລິດຕະພັນອື່ນໆ. ໃນປີ 2021 ມີຫຼາຍອຸດສາຫະກຳທີ່ໄດ້ຟື້ນຕົວຂຶ້ນເຊັ່ນ ດ້ານພະລັງງານ, ບໍ່ແຮ່, ອຸດສາຫະ

ກຳປຸງແຕ່ງເພື່ອສົ່ງອອກ. ຢ່າງໃດກໍຕາມຂະແໜງການບໍລິການ ໂດຍສະເພາະຂະແໜງການໂຮງແຮມ, ຂົນສົ່ງທາງອາກາດ ແລະ ບັນດາຂະແໜງການທີ່ປິ່ນອ້ອມການທ່ອງທ່ຽວແມ່ນຍັງຈະໄດ້ມີຄວາມຫຍຸ້ງຍາກໃນການຟື້ນຕົວໃນປີ 2021 ຍ້ອນສະພາບການລະບາດຄືນເທື່ອທີ 2 ທີ່ມີລັກສະນະຮ້າຍແຮງກວ່າເກົ່າ, ເຮັດໃຫ້ລັດຖະບານຕ້ອງໄດ້ວາງມາດຕະການສະກັດກັ້ນການເດີນທາງເຄັ່ງຄັດກວ່າເກົ່າ. ເຖິງແມ່ນວ່າເສດຖະກິດຈະມີການຟື້ນຕົວຂຶ້ນ ເສດຖະກິດຂອງ ສປປ ລາວ ຍັງໄດ້ປະເຊີນໜ້າກັບສິ່ງທ້າທາຍຫຼາຍອັນ ໂດຍສະເພາະແມ່ນສະພາບຂອງໜີ້ສາທາລະນະສູງເກີນຄວນ, ສະພາບເງິນກີບທີ່ອ່ອນຕົວລົງ ທີ່ເຮັດໃຫ້ລາຄາອາຫານ ແລະ ເຄື່ອງອຸປະໂພກ ບໍລິໂພກເພີ່ມຂຶ້ນ, ກະທົບເຖິງຊີວິດການເປັນຢູ່ຂອງຊຸມຊົນ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ອັນສຳຄັນທີ່ສຸດແມ່ນສະພາບແວດລ້ອມທີ່ອຳນວຍໃຫ້ແກ່ການດຳເນີນທຸລະກິດຢູ່ ສປປ ລາວ ແມ່ນຍັງຕ່ຳທີ່ສຸດ. ສະພາບສິ່ງທ້າທາຍທີ່ກ່າວມານີ້ໄດ້ເຮັດໃຫ້ລັດຖະບານມີຂໍ້ຈຳກັດດ້ານງົບປະມານ ແລະ ທຶນຮອນ ເພື່ອຊ່ວຍເຫຼືອທຸລະກິດ ແລະ ສັງຄົມ ໃນການຟື້ນຟູເສດຖະກິດ ພ້ອມທັງເຮັດໃຫ້ພາກທຸລະກິດມີຄວາມຫຍຸ້ງຍາກຫຼາຍຂຶ້ນເພື່ອປະຄອງ ແລະ ຟື້ນຟູທຸລະກິດຂອງຕົນເອງໃນໄລຍະຕໍ່ໄປ.

ສະພາບການແຜ່ລະບາດຂອງພະຍາດ COVID-19 ແມ່ນໄດ້ມີການແກ່ຍາວຢ່າງບໍ່ໜ້າຄິດ, ພະຍາດໄດ້ມີການຂະຫຍາຍສາຍພັນທີ່ມີຄວາມຮ້າຍແຮງຫຼາຍກວ່າເກົ່າ ແລະ ຍັງບໍ່ຮູ້ວ່າສະພາບດັ່ງກ່າວຈະສິ້ນສຸດລົງມື້ໃດ. ສະພາບການລະບາດຮອບທີ 2 ແຕ່ເດືອນເມສາ 2021 ນີ້ ໄດ້ເຮັດໃຫ້ພາກທຸລະກິດໃນທຸກຂະແໜງການ ມີຄວາມກັງວົນຫຼາຍຕໍ່ອານາຄົດຂອງທຸລະກິດ ແລະ ໄດ້ຮຽກຮ້ອງໃຫ້ລັດຖະບານພິຈາລະນາເພີ່ມນະໂຍບາຍ ແລະ ມາດຕະການເພື່ອຟື້ນຟູເສດຖະກິດຢ່າງມີປະສິດທິຜົນໄປເທື່ອລະກ້າວ.

ຂ້າພະເຈົ້າຂໍຊົມເຊີຍນະໂຍບາຍຂອງລັດຖະບານທີ່ຈັດຫາວັກຊີນປ້ອງກັນພະຍາດ ແລະ ລະດົມປະຊາຊົນ ແລະ ຄົນຕ່າງປະເທດທີ່ຢູ່ ສປປ ລາວ ໄປສັກຢາໃຫ້ໄດ້ຕາມເປົ້າໝາຍ 50% ຂອງປະຊາກອນໃນປີ 2021. ຖ້າສຳເລັດໄດ້ແນວນີ້ ນອກຈາກການປ້ອງກັນພະຍາດໃຫ້ປະຊາຊົນລາວແລ້ວ ມີຫຼາຍຂະແໜງການທຸລະກິດ ໂດຍສະເພາະຂະແໜງ ການທ່ອງທ່ຽວທີ່ຈະສາມາດຟື້ນຟູຕົນເອງປະກອບສ່ວນໃນເສດຖະກິດຂອງຊາດ. ພາກທຸລະກິດນຳພາໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດແມ່ນໄດ້ສ້າງໂຄງການ “ສັກວັກຊີນ ເພື່ອເຮົາ ເພື່ອຊາດ” ເພື່ອຊ່ວຍຈັດການ ແລະ ລະດົມທຶນຈາກພາກທຸລະກິດໃຫ້ແກ່ໂຄງການສັກວັກຊີນຂອງລັດຖະບານໃຫ້ໄດ້ຕາມເປົ້າໝາຍ ໂດຍມີແນວ

ຄວາມຄິດວ່າ ຖ້າທຸກຄົນໄດ້ສັກວັກຊີນ ຄວາມສ່ຽງຈະຫຼຸດລົງ ແລະ ປະເທດຈະໄດ້ເປີດຂຶ້ນ ທຸລະກິດຈະສາມາດດຳເນີນໄດ້.

ຂ້າພະເຈົ້າຂໍຊົມເຊີຍລັດຖະບານທີ່ໄດ້ສະເໜີວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ. ຕໍ່ວາລະແຫ່ງຊາດດັ່ງກ່າວ ຍ້ອນສະພາບຄວາມບໍ່ແນ່ນອນ ແລະ ສະພາບຄວາມລັງເລໃຈໃນການດຳເນີນທຸລະກິດໃນອານາຄົດ ມັນມີຄວາມຮຽກຮ້ອງຕ້ອງການໃຫ້ລັດຖະບານໃນຍຸກປົກກະຕິແບບໃໝ່ ໄດ້ເນັ້ນໃສ່ຜົນຮັບດ້ານຈິດຕະວິທະຍາ ທີ່ຈະສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ໃຫ້ແກ່ຜູ້ປະກອບການທຸລະກິດ ໃຫ້ເຂົາເຈົ້າເລີ່ມເຄື່ອນໄຫວ, ໃຊ້ຈ່າຍ ແລະ ລົງທຶນຄືນໃໝ່ທີ່ຈະຊ່ວຍໃນການເຄື່ອນເໜັງເສດຖະກິດໂດຍທັນທີ. ໃນນັ້ນນະໂຍບາຍ ແລະ ມາດຕະການຄວນຈະໄດ້ພິຈາລະນາ ກຳນົດຂະແໜງການເປັນບູລິມາສິດຕົ້ນຕໍ ເພື່ອການຟື້ນຟູເສດຖະກິດເປັນໄລຍະກາງ ແລະ ໄລຍະຍາວ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ບັນດາວິສາຫະກິດ, ໂດຍສະເພາະ ວິສາຫະກິດຂະໜາດນ້ອຍ ຂະໜາດກາງ (SME) ໃຫ້ມີການປັບແຜນທຸລະກິດ ແລະ ແຜນການເງິນຂອງຕົນໃຫ້ໄປຕາມຄວາມຕ້ອງການໃໝ່ ໃນຍຸກສະໄໝປົກກະຕິແບບໃໝ່ (New normal) ຢ່າງມີປະສິດທິຜົນໂດຍເລັງໃສ່ການເສີມສ້າງ ແລະ ເພີ່ມທະວີການຜະລິດພາຍໃນໃຫ້ຫຼາຍຂຶ້ນ. ອັນສຳຄັນທີ່ສຸດໃນຍຸກນີ້ ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແວດລ້ອມການດຳເນີທຸລະກິດໃຫ້ດີຂຶ້ນໄປເທື່ອລະກ້າວ, ສ້າງລະບົບນິເວດ (Ecosystem) ໃນແຕ່ລະຈຸດທີ່ຕ້ອງການເພື່ອສົ່ງເສີມການຜະລິດທຸລະກິດເຊັ່ນ: ການຈົດທະບຽນ ແລະ ອະນຸຍາດທຸລະກິດໃຫ້ງ່າຍດາຍ, ການເຂົ້າເຖິງແຫຼ່ງທຶນ, ການເຂົ້າເຖິງຕະຫຼາດ ແລະ ການເຂົ້າເຖິງເຕັກໂນໂລຢີດີຢີ, ການຈັດຕັ້ງຮ່ວມໝູ່ຂອງພາກທຸລະກິດ ແລະ ອື່ນໆ ເພື່ອໃຫ້ພາກທຸລະກິດໄດ້ມີການຂະຫຍາຍຕົວ ແລະ ເພື່ອການລະດົມການລົງທຶນຈາກຕ່າງປະເທດ.

ໃນຍຸກສະໄໝປົກກະຕິແບບໃໝ່ນີ້ ພາກທຸລະກິດ ໂດຍສະເພາະຜູ້ປະກອບການທີ່ເປັນຄົນລາວ ຈະຕ້ອງອາໄສໂອກາດນີ້ ປ່ຽນແປງທັດສະນະຄະຕິໃນການດຳເນີນທຸລະກິດ ແລະ ໃນການດຳລົງຊີວິດຂອງຕົນເອງໃຫ້ມີຄວາມເດັດຂາດ, ໂປ່ງໃສ ແລະ ບໍລິຫານຈັດການແບບມືອາຊີບຕາມທິດທາງຂອງທ່ານນາຍົກລັດຖະມົນຕີໄດ້ວາງໄວ້.

ທຸລະກິດທີ່ມີຄວາມເດັດຂາດແມ່ນທຸລະກິດທີ່ມີທິດທາງ, ແຜນການ ແລະ ການຈັດການທີ່ມີປະສິດຕິພາບ, ເພື່ອປັບປຸງ ຫຼື ຫັນປ່ຽນທຸລະກິດໃຫ້ໄປຕາມຄວາມຕ້ອງການຂອງຕະຫຼາດຍຸກໃໝ່, ພ້ອມທັງປະຕິບັດຕາມມາດຖານປ້ອງກັນການແຜ່ລະບາດຂອງພະຍາດ COVID–19 ຢ່າງມີປະສິດທິຜົນ ໃນສະຖານທີ່ປະກອບການຂອງຕົນ. ທຸລະກິດຈະເພີ່ມຄວາມເດັດຂາດໄດ້ຖ້າຫາກມີລະບົບນິເວດ

ທີ່ອຳນວຍໃຫ້ມີການລິເລີ່ມທຸລະກິດໃໝ່ (Start-up) ລວມທັງມີການອຳນວຍຄວາມສະດວກໃຫ້ແກ່ການຈົດທະບຽນ ແລະ ອານຸຍາດດຳເນີນທຸລະກິດ ແລະ ລະບົບຄຸ້ມຄອງ ແລະ ເກັບພາສີ-ອາກອນທີ່ເໝາະສົມ.

ທຸລະກິດທີ່ມີຄວາມໂປ່ງໃສແມ່ນທຸລະກິດທີ່ບໍ່ເຄື່ອນໄຫວນອກລະບົບ ມີທະບຽນ ແລະ ໃບອານຸຍາດດຳເນີນທຸລະກິດທີ່ຖືກຕ້ອງ, ເປັນທຸລະກິດທີ່ປະຕິບັດພັນທະດ້ານພາສີ-ອາກອນ ແລະ ອື່ນໆຢ່າງຖືກຕ້ອງ ແລະ ບໍ່ຊຸກຍູ້ໃຫ້ມີການສໍ້ລາດບັງຫຼວງ. ເພື່ອອຳນວຍຄວາມສະດວກໃຫ້ທຸລະກິດມີຄວາມໂປ່ງໃສ ຕ້ອງມີລະບົບນິເວດທີ່ອຳນວຍໃຫ້ການ ດຳເນີນທຸລະກິດໃຫ້ງ່າຍດາຍຂຶ້ນ ແລະ ມີຜົນກຳໄລ ພ້ອມທັງມີລະບົບໃນການຄຸ້ມຄອງການເຄື່ອນໄຫວຂອງທຸລະກິດທີ່ເຂັ້ມແຂງ ໂດຍມີສ່ວນຮ່ວມຂອງອົງການຈັດຕັ້ງຂອງພາກທຸລະກິດກໍ່ຄືຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ແລະ ຂອງກຸ່ມສະມາຄົມທຸລະກິດຕາມອາຊີບ ແລະ ຂະແໜງການໃນ ສປປ ລາວ.

ທຸລະກິດທີ່ເຄື່ອນໄຫວແບບມືອາຊີບ ແມ່ນທຸລະກິດທີ່ຮູ້ວິເຄາະຜົນໄດ້ຮັບ ກຳໄລ-ຂາດທຶນຂອງທຸລະກິດ, ຮູ້ປະຢັດມັດທະຍັດ ພ້ອມທັງມີເຄືອຂ່າຍ (Network) ດ້ານການຄ້າ ແລະ ການບໍລິການທີ່ໝັ້ນຄົງກັບຕະຫຼາດທີ່ຕົນໄດ້ສະໜອງ ແລະ ບໍລິການ ໂດຍສະເພາະກັບຕະຫຼາດສາກົນ. ເພື່ອອຳນວຍຄວາມສະດວກໃຫ້ທຸລະກິດໄດ້ເຄື່ອນໄຫວແບບມືອາຊີບ ຕ້ອງມີລະບົບນິເວດທີ່ອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການລົງທຶນ, ຕັດບັນດາຂອດລະຫວ່າງກາງ ແລະ ລະບຽບການທີ່ບໍ່ຈຳເປັນ ພ້ອມທັງສົ່ງເສີມການຈັດຕັ້ງການຜະລິດ, ຈໍລະຈອນ, ຈຳໜ່າຍສິນຄ້າຂອງພາກລັດທຸລະກິດໃຫ້ເປັນກຸ່ມ, ສະມາຄົມ ແລະ ສະຫະກອນ ເພື່ອເພີ່ມວົງກ້ວາງ, ເພີ່ມຖານຂອງການຜະລິດ ແລະ ຖານເສດຖະກິດໃຫ້ໃຫຍ່ໂຕແບບລວມສູນ ບໍ່ເອກະເທດ.

ຂ້າພະເຈົ້າຂໍຢັ້ງຢືນວ່າ ເວທີທຸລະກິດລາວນີ້ເປັນເວທີທີ່ການພົບປະລະຫວ່າງ ພາກລັດຖະບານ ແລະ ພາກທຸລະກິດໃນ ສປປ ລາວ ທີ່ມີຄວາມສຳຄັນໃນການເສີມສ້າງ ແ ລ ະ ພັດທະນາທຸລະກິດກໍ່ຄືເສດຖະກິດໃນຍຸກປົກກະຕິແບບໃໝ່ (New normal) ດັ່ງທີ່ຂ້າພະເຈົ້າໄດ້ເອີ່ຍມານີ້ ແລະ ຫວັງວ່າທ່ານ ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະຈະໄດ້ສືບຕໍ່ໃຫ້ຄວາມຮ່ວມມືໃນການແກ້ໄຂສະພາບໃນການດຳເນີນທຸລະກິດຢູ່ ສປປ ລາວ ໂດຍຮ່ວມກັບພາກທຸລະກິດຢ່າງມີປະສິດທິຜົນ. ສຸດທ້າຍນີ້ຂ້າພະເຈົ້າ ຂໍອວຍພອນໃຫ້ກອງປະຊຸມທຸລະກິດຄັ້ງທີ 13 ຈົ່ງມີຜົນສຳເລັດ ແລະ ໄດ້ຮັບໝາກຜົນຢ່າງສູງ. ຂໍຂອບໃຈ.